ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ເລກທີ 1026 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 28 ທັນວາ 2022

# ຂໍ້ຕົກລົງ
# ວ່າດ້ວຍການບໍລິການແລກປ່ຽນເງິນຕາ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ການຄົ້ນຄວ້າ ແລະ ການສະເໜີ ຂອງກົມນະໂຍບາຍເງິນຕາ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ ແລະ ລະບຽບການ ກ່ຽວກັບການບໍລິການແລກປ່ຽນເງິນຕາຂອງທະນາຄານທຸລະກິດ ເພື່ອເຮັດໃຫ້ການບໍລິການແລກປ່ຽນເງິນຕາເຄື່ອນໄຫວມີປະສິດທິຜົນໃນການດຸ່ນດ່ຽງລະຫວ່າງຄວາມຕ້ອງການກັບການສະໜອງເງິນຕາຕ່າງປະເທດໃຫ້ສັງຄົມ ແທດເໝາະກັບສະພາບເສດຖະກິດໃນແຕ່ລະໄລຍະ ແລະ ສາມາດປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ.

**ມາດຕາ 2 ການບໍລິການແລກປ່ຽນເງິນຕາ**

ການບໍລິການແລກປ່ຽນເງິນຕາ ແມ່ນການເຄື່ອນໄຫວທຸລະກິດເງິນຕາຂອງທະນາຄານທຸລະກິດໃນການດໍາເນີນທຸລະກໍາ ຊື້ ແລະ/ຫຼື ຂາຍ ເງິນຕາຕ່າງປະເທດ ລະຫວ່າງ ທະນາຄານທຸລະກິດກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຊໍາລະຢູ່ພາຍໃນ ແລະ ຕ່າງປະເທດ ໂດຍສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເງິນຕາ** ໝາຍເຖິງ ສະກຸນເງິນກີບ ແລະ ສະກຸນເງິນຕາຕ່າງປະເທດ ໃນຮູບແບບທະນະບັດ ຫຼື ເອເລັກໂຕຣນິກ;

2. **ເງິນຕາຕ່າງປະເທດ** ໝາຍເຖິງ ເງິນຕາສະກຸນອື່ນທີ່ຮັບຮູ້ ແລະ ນຳໃຊ້ຢ່າງເປັນທາງການຕາມກົດໝາຍຂອງເຂດປົກຄອງ, ປະເທດ ແລະ ພາກພື້ນ ທີ່ກ່ຽວຂ້ອງ;

3. **ທະນາຄານທຸລະກິດ** ໝາຍເຖິງ ທະນາຄານທຸລະກິດລັດ, ທະນາຄານທຸລະກິດລັດຮ່ວມທຶນ, ທະນາຄານທຸລະກິດເອກະຊົນ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ;

4. **ໜ່ວຍແລກປ່ຽນເງິນຕາ** ໝາຍເຖິງ ໜ່ວຍບໍລິການຂອງທະນາຄານທຸລະກິດ ທີ່ໃຫ້ບໍລິການແລກປ່ຽນເງິນຕາເທົ່ານັ້ນ ຊຶ່ງສ້າງຕັ້ງຂຶ້ນບົນພື້ນຖານສັນຍາລະຫວ່າງ ທະນາຄານທຸລະກິດ ກັບ ນິຕິບຸກຄົນໃດໜຶ່ງ.

**ມາດຕາ 4 ຫຼັກການກ່ຽວກັບການບໍລິການແລກປ່ຽນເງິນຕາ**

ການບໍລິການແລກປ່ຽນເງິນຕາ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ແລກປ່ຽນເງິນຕາຜ່ານທະນາຄານທຸລະກິດເທົ່ານັ້ນ;
2. ກຳນົດອັດຕາແລກປ່ຽນຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ;
3. ປະຕິບັດຫຼັກການບັນຊີ ແລະ ການລາຍງານ ໂດຍສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ;
4. ເຄື່ອນໄຫວໂປ່ງໃສ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ທະນາຄານທຸລະກິດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການແລກປ່ຽນເງິນຕາ ຢູ່ ສປປ ລາວ.

## ໝວດທີ 2
## ການບໍລິການແລກປ່ຽນເງິນຕາຂອງທະນາຄານທຸລະກິດ

**ມາດຕາ 6 ການບໍລິການແລກປ່ຽນເງິນຕາຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ມີໜ້າທີ່ໃຫ້ບໍລິການແລກປ່ຽນເງິນຕາແກ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີການເຄື່ອນໄຫວທຸລະກິດ ຫຼື ດຳເນີນທຸລະກຳໃດໜຶ່ງຢູ່ ສປປ ລາວ ໂດຍສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ.

ທະນາຄານທຸລະກິດ ສາມາດສ້າງຕັ້ງໜ່ວຍແລກປ່ຽນເງິນຕາຂອງຕົນໃນກໍລະນີທີ່ບໍ່ທັນມີຄວາມພ້ອມໃຫ້ບໍລິການແລກປ່ຽນເງິນຕາໄດ້ໂດຍກົງໃນສະຖານທີ່ທີ່ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້. ທະນາຄານທຸລະກິດ ຕ້ອງຮັບຜິດຊອບຮອບດ້ານຕໍ່ການເຄື່ອນໄຫວຂອງໜ່ວຍແລກປ່ຽນເງິນຕາທີ່ຂຶ້ນກັບຕົນ ແລະ ມີສິດຍຸບເລີກໜ່ວຍແລກປ່ຽນເງິນຕາດັ່ງກ່າວ.

### ມາດຕາ 7 ເງື່ອນໄຂຂອງທະນາຄານທຸລະກິດທີ່ໃຫ້ບໍລິການແລກປ່ຽນເງິນຕາ

ທະນາຄານທຸລະກິດ ທີ່ໃຫ້ບໍລິການແລກປ່ຽນເງິນຕາ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີລະບຽບການກ່ຽວກັບການບໍລິການແລກປ່ຽນເງິນຕາ ໂດຍສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ, ການບໍລິຫານຄວາມສ່ຽງດ້ານການຕະຫຼາດຕິດພັນກັບການບໍລິການແລກປ່ຽນເງິນຕາ ແລະ ການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ;

2. ມີໜ່ວຍງານຮັບຜິດຊອບກຳນົດອັດຕາແລກປ່ຽນ, ລາຍງານຂໍ້ມູນອັດຕາແລກປ່ຽນ ແລະ ການ ຊື້ ແລະ ຂາຍ ປະຈຳວັນ ແລະ ມີລະບົບຕິດຕາມກວດກາການເຄື່ອນໄຫວແລກປ່ຽນເງິນຕາຂອງຕົນ;

3. ບຸກຄະລາກອນທີ່ກ່ຽວຂ້ອງກັບການບໍລິການແລກປ່ຽນເງິນຕາ ຕ້ອງມີໃບຢັ້ງຢືນການຝຶກອົບຮົມກ່ຽວກັບການບໍລິການແລກປ່ຽນເງິນຕາ, ການກວດກາທະນະບັດ ຈາກສະຖາບັນການສຶກສາທີ່ຮ່ວມມື ກັບທະນາຄານແຫ່ງ ສປປ ລາວ;

4. ມີອຸປະກອນ, ສິ່ງອຳນວຍຄວາມສະດວກ ແລະ ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ທີ່ມີຄວາມປອດໄພໃນການບໍລິການແລກປ່ຽນເງິນຕາ, ການຄຸ້ມຄອງຄວາມສ່ຽງ ແລະ ສາມາດລາຍງານ ໃຫ້ທະນາຄານແຫ່ງ ສປປ ລາວ ໄດ້ຢ່າງມີປະສິດທິຜົນ;

5. ເງື່ອນໄຂອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

### ມາດຕາ 8 ເງື່ອນໄຂສ້າງຕັ້ງໜ່ວຍແລກປ່ຽນເງິນຕາ

ທະນາຄານທຸລະກິດ ທີ່ມີຈຸດປະສົງສ້າງຕັ້ງໜ່ວຍແລກປ່ຽນເງິນຕາ ຕ້ອງຂໍອະນຸຍາດນຳກົມຄຸ້ມຄອງທະນາຄານທຸລະກິດ ໂດຍມີເງື່ອນໄຂຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ແລະ ມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ເປັນທະນາຄານທຸລະກິດລັດ, ທະນາຄານທຸລະກິດລັດ-ຮ່ວມທຶນ ແລະ ທະນາຄານທຸລະກິດເອກະຊົນ;

2. ມີລະບຽບການຄຸ້ມຄອງໜ່ວຍແລກປ່ຽນເງິນຕາ ທີ່ສອດຄ່ອງກັບລະບຽບການທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂໍ້ 1 ຂອງຂໍ້ຕົກລົງສະບັບນີ້;

3. ມີໜ່ວຍງານ ຫຼື ບຸກຄະລາກອນສະເພາະ ຄຸ້ມຄອງໜ່ວຍແລກປ່ຽນເງິນຕາ;

4. ມີລະບົບລາຍງານຂໍ້ມູນອັດຕາແລກປ່ຽນ ແລະ ການ ຊື້ ແລະ/ຫຼື ຂາຍ ເງິນຕາຕ່າງປະເທດ ທີ່ສາມາດເຊື່ອມຕໍ່ລະຫວ່າງ ທະນາຄານທຸລະກິດ ແລະ ໜ່ວຍແລກປ່ຽນເງິນຕາ, ຮັບປະກັນໃຫ້ແກ່ການລາຍງານ ໃຫ້ທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິຕາມລະບຽບການ;

5. ມີການຈັດຝຶກອົບຮົມ ແລະ ເຜີຍແຜ່ນິຕິກຳທີ່ກ່ຽວຂ້ອງກັບການບໍລິການແລກປ່ຽນເງິນຕາ ໃຫ້ໜ່ວຍແລກປ່ຽນເງິນຕາ ສອງ ຄັ້ງຕໍ່ປີ.

ນິຕິບຸກຄົນ ທີ່ມີຈຸດປະສົງເຊັນສັນຍາສ້າງຕັ້ງໜ່ວຍແລກປ່ຽນເງິນຕາກັບທະນາຄານທຸລະກິດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ສ້າງຕັ້ງໜ່ວຍແລກປ່ຽນເງິນຕາຢູ່ສະຖານທີ່ເຄື່ອນໄຫວທຸລະກິດຂອງຕົນ ດັ່ງນີ້:
   ກ. ໂຮງແຮມ ຫຼື ຣີສອດ ໃນລະດັບແຕ່ ສາມ ດາວຂຶ້ນໄປ;
   ຂ. ສະໜາມບິນສາກົນ ຫຼື ດ່ານຊາຍແດນ; 

ຄ. ສະຖານີລົດໄຟ;

ງ. ດ່ານສາກົນສິນຄ້າ (ທ່າບົກ);

ຈ. ກາຊິໂນ;

ສ. ສະຖານທີ່ອື່ນຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ແຕ່ລະໄລຍະ;

2. ມີສະຖານທີ່ບໍລິການແລກປ່ຽນເງິນຕາສະເພາະ ທີ່ປອດໄພ ແລະ ເໝາະສົມ;

3. ມີອຸປະກອນຮັບໃຊ້ ຄົບຖ້ວນ ເປັນຕົ້ນ ຄອມພິວເຕີ, ອິນເຕີເນັດ ແລະ ກ້ອງວົງຈອນປິດ, ໂທລະສານ, ເຄື່ອງສຳເນົາເອກະສານ, ເຄື່ອງກວດເງິນ, ເຄື່ອງນັບເງິນ, ເຄື່ອງຄິດໄລ່, ກະດານແຈ້ງອັດຕາແລກປ່ຽນ, ລະບົບລາຍງານທີ່ເຊື່ອມຕໍ່ກັບລະບົບຄຸ້ມຄອງການແລກປ່ຽນເງິນຕາຂອງທະນາຄານທຸລະກິດ ແລະ ອຸປະກອນຮັບໃຊ້ອື່ນທີ່ຈຳເປັນ;

4. ພະນັກງານປະຈຳໜ່ວຍແລກປ່ຽນເງິນຕາຕ້ອງມີໃບຢັ້ງຢືນການຝຶກອົບຮົມກ່ຽວກັບການບໍລິການແລກປ່ຽນເງິນຕາຈາກສະຖາບັນການສຶກສາ ຫຼື ຊຸດຝຶກອົບຮົມ ທີ່ທະນາຄານແຫ່ງ ສປປ ລາວ ຮັບຮູ້.

## ມາດຕາ 9 ເນື້ອໃນສັນຍາສ້າງຕັ້ງໜ່ວຍແລກປ່ຽນເງິນຕາ

ສັນຍາສ້າງຕັ້ງໜ່ວຍແລກປ່ຽນເງິນຕາລະຫວ່າງທະນາຄານທຸລະກິດ ແລະ ນິຕິບຸກຄົນຕ້ອງປະຕິບັດໃຫ້ສອດຄ່ອງກັບປະມວນກົດໝາຍແພ່ງ ແລະ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການກຳນົດອັດຕາແລກປ່ຽນ ໂດຍສອດຄ່ອງກັບມາດຕາ 12 ຂອງຂໍ້ຕົກລົງສະບັບນີ້;

2. ຂອບເຂດການ ຊື້ ແລະ/ຫຼື ຂາຍ ເງິນຕາຕ່າງປະເທດ ໂດຍສອດຄ່ອງກັບ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້;

3. ສິດ ແລະ ໜ້າທີ່ ຂອງຄູ່ສັນຍາ ໃນການບໍລິການແລກປ່ຽນເງິນຕາ;

4. ຂໍ້ກຳນົດກ່ຽວກັບການຖືຄອງເງິນສົດ, ການເປີດ ແລະ ນຳໃຊ້ບັນຊີເງິນຝາກ;

5. ລະບອບການລາຍງານ, ການເກັບຮັກສາເອກະສານ, ການບັນຊີ ແລະ ບຸກຄະລາກອນ;

6. ຂໍ້ກຳນົດກ່ຽວກັບມາດຕະການຕໍ່ໜ່ວຍແລກປ່ຽນເງິນຕາ ເປັນຕົ້ນ ການສຶກສາອົບຮົມ ແລະ ການປັບໃໝ.

## ມາດຕາ 10 ເອກະສານປະກອບຂໍສ້າງຕັ້ງໜ່ວຍແລກປ່ຽນເງິນຕາ

ເອກະສານປະກອບຂໍສ້າງຕັ້ງໜ່ວຍແລກປ່ຽນເງິນຕາ ມີເອກະສານ ດັ່ງນີ້:

1. ຄຳຮ້ອງຂໍສ້າງຕັ້ງໜ່ວຍແລກປ່ຽນເງິນຕາ ຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ;

2. ລະບຽບການກ່ຽວກັບການບໍລິການແລກປ່ຽນເງິນຕາ ທີ່ສອດຄ່ອງກັບລະບຽບການທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂໍ້ 1 ຂອງຂໍ້ຕົກລົງສະບັບນີ້ ທີ່ກວມເອົາບັນດາຂໍ້ກຳນົດກ່ຽວກັບການຄຸ້ມຄອງໜ່ວຍແລກປ່ຽນເງິນຕາ;

3. ຮ່າງສັນຍາສ້າງຕັ້ງໜ່ວຍແລກປ່ຽນເງິນຕາ;

4. ສຳເນົາໃບຢັ້ງຢືນການຝຶກອົບຮົມກ່ຽວກັບການບໍລິການແລກປ່ຽນເງິນຕາ ຂອງບຸກຄະລາກອນທີ່ກ່ຽວຂ້ອງກັບການຄຸ້ມຄອງໜ່ວຍແລກປ່ຽນເງິນຕາ.

### ມາດຕາ 11 ການພິຈາລະນາສ້າງຕັ້ງໜ່ວຍແລກປ່ຽນເງິນຕາ

ກົມຄຸ້ມຄອງທະນາຄານທຸລະກິດ ພິຈາລະນາການຂໍສ້າງຕັ້ງໜ່ວຍແລກປ່ຽນເງິນຕາຂອງທະນາຄານທຸລະກິດ ພາຍຫຼັງໄດ້ຮັບເອກະສານຂໍສ້າງຕັ້ງໜ່ວຍແລກປ່ຽນເງິນຕາ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້. ໃນການຄົ້ນຄວ້າພິຈາລະນາ ກົມຄຸ້ມຄອງທະນາຄານທຸລະກິດ ຕ້ອງປະສານ ສົມທົບ ກົມນະໂຍບາຍເງິນຕາ, ກົມເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ພາກສ່ວນກ່ຽວຂ້ອງ ລົງກວດກາທະນາຄານ ທຸລະກິດທີ່ຂໍສ້າງຕັ້ງໜ່ວຍແລກປ່ຽນເງິນຕາ ກ່ຽວກັບ ອຸປະກອນ, ສິ່ງອຳນວຍຄວາມສະດວກ, ລະບົບເຕັກໂນໂລຊີ ຂໍ້ມູນຂ່າວສານ ແລະ ຄວາມສາມາດຂອງພະນັກງານຕົວຈິງ ລວມທັງ ລະບຽບການກ່ຽວກັບການບໍລິການ ແລກປ່ຽນເງິນຕາ. ກົມຄຸ້ມຄອງທະນາຄານທຸລະກິດ ມີສິດທວງເອົາຂໍ້ມູນເພີ່ມເຕີມ ຈາກທະນາຄານທຸລະກິດທີ່ຂໍ ສ້າງຕັ້ງໜ່ວຍແລກປ່ຽນເງິນຕາ ຫາກເຫັນວ່າຂໍ້ມູນທີ່ໄດ້ມາຍັງບໍ່ພຽງພໍ.

### ມາດຕາ 12 ອັດຕາແລກປ່ຽນ

ທະນາຄານທຸລະກິດ ຕ້ອງກຳນົດອັດຕາແລກປ່ຽນ ຊື້ ແລະ ຂາຍ ເງິນຕາ ປະຈຳວັນ ແລະ ສະກຸນເງິນຕາ ຕ່າງ ປະເທດທີ່ ຊື້ ແລະ ຂາຍ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດ. ໃນນັ້ນ, ໜ່ວຍແລກປ່ຽນ ເງິນຕາຍັງຕ້ອງປະຕິບັດອັດຕາແລກປ່ຽນຕາມການກຳນົດຂອງທະນາຄານທຸລະກິດທີ່ຕົນຂຶ້ນກັບ.

ທະນາຄານທຸລະກິດ ຕ້ອງຕິດປະກາດອັດຕາແລກປ່ຽນສະກຸນເງິນທີ່ ຊື້ ແລະ ຂາຍ ແລະ ເປັນເງິນກີບ ເທົ່ານັ້ນ.

### ມາດຕາ 13 ການ ຊື້ ແລະ/ຫຼື ຂາຍ ເງິນຕາຕ່າງປະເທດ

ທະນາຄານທຸລະກິດ ຕ້ອງເປັນເຈົ້າການຕິດຕາມ ການເຄື່ອນໄຫວກະແສເງິນຕາຕ່າງປະເທດຂອງນິຕິບຸກຄົນ ທີ່ມີລາຍຮັບເປັນເງິນຕາຕ່າງປະເທດ, ລາຍຮັບຈາກການສົ່ງອອກ, ເງິນລົງທຶນຈາກຜູ້ລົງທຶນ ພ້ອມທັງດຳເນີນການຊື້ ເງິນຕາຕ່າງປະເທດ ນຳພາກສ່ວນດັ່ງກ່າວ ຕາມລະບຽບການທີ່ກ່ຽວຂ້ອງ.

ທະນາຄານທຸລະກິດ ມີຄວາມຮັບຜິດຊອບຂາຍເງິນຕາຕ່າງປະເທດ ໃຫ້ເປົ້າໝາຍທີ່ມີຈຸດປະສົງຊຳລະກັບ ຕ່າງປະເທດ ເພື່ອການນຳເຂົ້າສິນຄ້າ, ການບໍລິການ ແລະ ການຊຳລະໜີ້ສິນຕ່າງປະເທດ ເປັນຕົ້ນ ການນຳເຂົ້າສິນຄ້າບຸ ລິມະສິດຕາມແຈ້ງການຂອງທະນາຄານແຫ່ງ ສປປ ລາວ. ນອກຈາກນັ້ນ, ທະນາຄານທຸລະກິດ ສາມາດຂາຍເງິນຕາ ຕ່າງປະເທດ ຕາມຄວາມດຸນພິນິດຂອງຕົນ.

ໜ່ວຍແລກປ່ຽນເງິນຕາ ສາມາດຊື້ເງິນຕາຕ່າງປະເທດ ຈາກບຸກຄົນເທົ່ານັ້ນ ແລະ ຕ້ອງຂາຍເງິນຕາ ຕ່າງປະເທດທີ່ໄດ້ຈາກການເກັບຊື້ທັງໝົດ ໃຫ້ທະນາຄານທຸລະກິດທີ່ຕົນຂຶ້ນກັບ ພາຍໃນເວລາ ເຈັດ ວັນລັດຖະ ການ. ສຳລັບໜ່ວຍແລກປ່ຽນເງິນຕາ ທີ່ຕັ້ງຢູ່ດ່ານຊາຍແດນ ແລະ ສະໜາມບິນສາກົນ, ທະນາຄານທຸລະກິດສາມາດ ພິຈາລະນາ ໃຫ້ໜ່ວຍແລກປ່ຽນເງິນຕາດັ່ງກ່າວ ຂາຍເງິນຕາຕ່າງປະເທດໃຫ້ບຸກຄົນທີ່ຈະເດີນທາງອອກ ສປປ ລາວ ເທົ່ານັ້ນ.

### ມາດຕາ 14 ການຍຸບເລີກໜ່ວຍແລກປ່ຽນເງິນຕາ

ການຍຸບເລີກໜ່ວຍແລກປ່ຽນເງິນຕາ ສາມາດປະຕິບັດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໜ່ວຍແລກປ່ຽນເງິນຕາຂໍຍຸບເລີກດ້ວຍຄວາມສະໝັກໃຈ;

2. ທະນາຄານທຸລະກິດ ສາມາດຍຸບເລີກໜ່ວຍແລກປ່ຽນເງິນຕາ ທີ່ປະຕິບັດບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້ ແລະ/ຫຼື ສັນຍາສ້າງຕັ້ງໜ່ວຍແລກປ່ຽນເງິນຕາ;

3. ທະນາຄານແຫ່ງ ສປປ ລາວ ສາມາດຍຸບເລີກການບໍລິການແລກປ່ຽນເງິນຕາຂອງທະນາຄານທຸລະກິດ ແລະ/ຫຼື ໜ່ວຍແລກປ່ຽນເງິນຕາໃດໜຶ່ງ ໃນກໍລະນີທີ່ປະຕິບັດບໍ່ສອດຄ່ອງກັບລະບຽບການກ່ຽວຂ້ອງຂອງທະນາຄານແຫ່ງ ສປປ ລາວ ກຳນົດ.

## ໝວດທີ 3
## ການບັນຊີ ແລະ ການລາຍງານ

**ມາດຕາ 15 ການບັນຊີຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ທີ່ໃຫ້ບໍລິການແລກປ່ຽນເງິນຕາ ຕ້ອງຖືບັນຊີສອດຄ່ອງກັບລະບຽບຫຼັກການທີ່ທະນາຄານແຫ່ງ ສປປ ລາວ ກຳນົດ, ທຸລະກຳການເຄື່ອນໄຫວຕ້ອງມີບັນຊີຕິດຕາມ ໂດຍຜ່ານບັນຊີຖານະ ແລະ ຄູ່ມູນຄ່າຖານະແລກປ່ຽນເງິນຕາຕ່າງປະເທດ.

**ມາດຕາ 16 ການບັນຊີຂອງໜ່ວຍແລກປ່ຽນເງິນຕາ**

ທະນາຄານທຸລະກິດຕ້ອງໃຫ້ໜ່ວຍແລກປ່ຽນເງິນຕາທີ່ຂຶ້ນກັບຕົນ ມີເລກບັນຊີຖານະ ແລະ ຄູ່ມູນຄ່າຖານະແລກປ່ຽນເງິນຕາຕ່າງປະເທດ ເພື່ອຮັບຮູ້ການເຄື່ອນໄຫວຖານະ ຊື້ ແລະ/ຫຼື ຂາຍ ເງິນຕາຕ່າງປະເທດ.

**ມາດຕາ 17 ການລາຍງານຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ຕ້ອງລາຍງານຢ່າງເປັນປົກກະຕິໃຫ້ທະນາຄານແຫ່ງ ສປປ ລາວ, ສຳລັບສາຂາຂອງທະນາຄານທຸລະກິດທີ່ຢູ່ຕ່າງແຂວງ ຕ້ອງລາຍງານສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ດັ່ງນີ້:

1. ການກຳນົດອັດຕາແລກປ່ຽນ ແຕ່ລະສະກຸນເງິນ ໃຫ້ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ພາຍໃນເວລາ 9:00 ໂມງຂອງແຕ່ລະວັນ. ນອກຈາກນີ້, ຖ້າມີການປັບອັດຕາແລກປ່ຽນເພີ່ມເຕີມໃນລະຫວ່າງວັນ ຕ້ອງລາຍງານທັນທີ ຕາມແບບພິມລາຍງານ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;

2. ການ ຊື້ ແລະ ຂາຍ ເງິນຕາປະຈຳວັນ ພາຍໃນເວລາ 16:00 ໂມງ ຂອງແຕ່ລະວັນ ໃຫ້ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ. ສຳລັບການ ຊື້ ແລະ ຂາຍ ຫຼັງເວລາ 16:00 ໂມງ ແມ່ນໃຫ້ລາຍງານ ພາຍໃນເວລາ 10:00 ໂມງ ຂອງວັນລັດຖະການຖັດໄປ ຕາມແບບພິມລາຍງານ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;

3. ການແລກປ່ຽນເງິນຕາທີ່ມີລັກສະນະສົງໄສ ຫຼື ການກະທຳໃດໜຶ່ງທີ່ເປັນການປັ່ນປ່ວນລະບົບອັດຕາແລກປ່ຽນ ຕ້ອງລາຍງານໃຫ້ກົມນະໂຍບາຍເງິນຕາ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຊາບທັນທີ;

4. ການເຊັນສັນຍາສ້າງຕັ້ງໜ່ວຍແລກປ່ຽນເງິນຕາ ແລະ ການປັບປຸງສັນຍາດັ່ງກ່າວ ຕ້ອງລາຍງານພາຍໃນເວລາ ສິບ ວັນ ຫຼັງຈາກດຳເນີນການສຳເລັດ ໂດຍນຳສົ່ງສຳເນົາສະບັບຕົ້ນ ແລະ/ຫຼື ສະບັບປັບປຸງ ໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ;

5. ສະພາບການເຄື່ອນໄຫວ, ຂໍ້ມູນສະຖິຕິ ການ ຊື້ ແລະ ຂາຍ ເງິນຕາຕ່າງປະເທດ ແລະ ອື່ນໆ ທີ່ກ່ຽວຂ້ອງກັບການບໍລິການແລກປ່ຽນເງິນຕາ ຕາມການຮຽກຮ້ອງຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 18 ການລາຍງານຂອງໜ່ວຍແລກປ່ຽນເງິນຕາ**

ທະນາຄານທຸລະກິດ ຕ້ອງກຳນົດໃຫ້ໜ່ວຍແລກປ່ຽນເງິນຕາ ລາຍງານຢ່າງເປັນປົກກະຕິ ດັ່ງນີ້:

1. ການ ຊື້ ແລະ/ຫຼື ຂາຍ ເງິນຕາ;

2. ສະພາບການເຄື່ອນໄຫວ, ຂໍ້ມູນສະຖິຕິ ການ ຊື້ ແລະ/ຫຼື ຂາຍ ເງິນຕາຕ່າງປະເທດ ແລະ ອື່ນໆ ທີ່ກ່ຽວຂ້ອງກັບການບໍລິການແລກປ່ຽນເງິນຕາ ຕາມການຮຽກຮ້ອງ.

ສຳລັບການແລກປ່ຽນເງິນຕາທີ່ມີລັກສະນະສົງໄສ ຫຼື ການກະທຳໃດໜຶ່ງ ທີ່ເປັນການປັ່ນປ່ວນລະບົບອັດຕາແລກປ່ຽນ ຕ້ອງລາຍງານໃຫ້ທະນາຄານທຸລະກິດ ຊາບທັນທີ.

**ມາດຕາ 19 ການປະຕິບັດວຽກງານຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ທະນາຄານທຸລະກິດ ມີໜ້າທີ່ ປະຕິບັດວຽກງານຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ລາຍງານຂໍ້ມູນທີ່ມີລັກສະນະສົງໄສໃຫ້ກົມຄຸ້ມຄອງທະນາຄານທຸລະກິດ.

ທະນາຄານທຸລະກິດ ມີໜ້າທີ່ກຳນົດຫຼັກການ ແລະ ລະບຽບການກ່ຽວກັບວຽກງານຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອໃຫ້ໜ່ວຍແລກປ່ຽນເງິນຕາຈັດຕັ້ງປະຕິບັດ ພ້ອມທັງຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

## ໝວດທີ 4
## ການຄຸ້ມຄອງການບໍລິການແລກປ່ຽນເງິນຕາ

**ມາດຕາ 20 ການຄຸ້ມຄອງການບໍລິການແລກປ່ຽນເງິນຕາ**

ກົມຄຸ້ມຄອງທະນາຄານທຸລະກິດ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການ ໃນການປະສານສົມທົບກັບກົມນະໂຍບາຍເງິນຕາ, ກົມຄຸ້ມຄອງລະບົບການຊຳລະ, ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ໃນການຄຸ້ມຄອງການບໍລິການແລກປ່ຽນເງິນຕາ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງທະນາຄານທຸລະກິດ**

ໃນການຄຸ້ມຄອງການບໍລິການແລກປ່ຽນເງິນຕາ ກົມຄຸ້ມຄອງທະນາຄານທຸລະກິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ ກວດກາ ທະນາຄານທຸລະກິດໃນການບໍລິການແລກປ່ຽນເງິນຕາໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

2. ເກັບກຳ, ສັງລວມ ຂໍ້ມູນສະຖິຕິ ແລະ ເອກະສານ ທີ່ຈຳເປັນ ຂອງທະນາຄານທຸລະກິດທີ່ໃຫ້ບໍລິການແລກປ່ຽນເງິນຕາ ແລະ ໜ່ວຍແລກປ່ຽນເງິນຕາ ລວມທັງສັນຍາ ແລະ ການປ່ຽນແປງເນື້ອໃນສັນຍາ;

3. ກຳນົດລະບຽບການຄຸ້ມຄອງຄວາມສ່ຽງໃນການບໍລິການແລກປ່ຽນເງິນຕາ ຂອງທະນາຄານທຸລະກິດ ໂດຍປະສານສົມທົບກັບກົມນະໂຍບາຍເງິນຕາ ແລະ ພາກສ່ວນທີ່ກ່ຽວຂ້ອງ;

4. ກຳນົດມາດຕະການ ແລະ ນຳໃຊ້ມາດຕະການຕໍ່ທະນາຄານທຸລະກິດທີ່ລະເມີດຂໍ້ຕົກລົງສະບັບນີ້;

5. ຄົ້ນຄວ້າການສະເໜີຂໍອະນຸຍາດສ້າງຕັ້ງໜ່ວຍແລກປ່ຽນເງິນຕາ ຂອງທະນາຄານທຸລະກິດ;

6. ທວງເອົາຂໍ້ມູນ ແລະ ເອກະສານ ທີ່ກ່ຽວຂ້ອງກັບການເຄື່ອນໄຫວແລກປ່ຽນເງິນຕາຂອງທະນາຄານທຸລະກິດ ແລະ ໜ່ວຍແລກປ່ຽນເງິນຕາ;

7. ຄົ້ນຄວ້າ, ວິເຄາະ ຂໍ້ມູນ ແລະ ເອກະສານຕ່າງໆ ທີ່ເກັບກຳໄດ້ ພ້ອມທັງສະຫຼຸບສະພາບ ແລະ ຕີລາຄາການເຄື່ອນໄຫວບໍລິການແລກປ່ຽນເງິນຕາ ຂອງທະນາຄານທຸລະກິດ ເພື່ອລາຍງານໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

8. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບ ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງລະບົບການຊຳລະ, ກົມເຕັກໂນໂລຊີຂໍ້ມູນຂ່າວສານ, ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 22 ສິດ ແລະ ໜ້າທີ່ ຂອງກົມນະໂຍບາຍເງິນຕາ

ໃນການຄຸ້ມຄອງການບໍລິການແລກປ່ຽນເງິນຕາ ກົມນະໂຍບາຍເງິນຕາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກຳ, ສັງລວມ ແລະ ວິເຄາະ ຂໍ້ມູນຈາກການລາຍງານກ່ຽວກັບອັດຕາແລກປ່ຽນ ແລະ ມູນຄ່າການ ຊື້ ແລະ ຂາຍ ເງິນຕາ ປະຈຳວັນ ຂອງທະນາຄານທຸລະກິດ;

2. ຕິດຕາມ ກວດກາ ການປະຕິບັດອັດຕາແລກປ່ຽນ ແລະ ການ ຊື້ ແລະ ຂາຍ ເງິນຕາ ຂອງທະນາຄານທຸລະກິດ ໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

3. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບ ກັບກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງລະບົບການຊຳລະ ແລະ ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນ;

4. ສະຫຼຸບສະພາບ ແລະ ຕີລາຄາ ກ່ຽວກັບການກຳນົດອັດຕາແລກປ່ຽນ ແລະ ການ ຊື້ ແລະ ຂາຍ ເງິນຕາ ຂອງທະນາຄານທຸລະກິດ ເພື່ອລາຍງານໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 23 ສິດ ແລະ ໜ້າທີ່ຂອງກົມຄຸ້ມຄອງລະບົບການຊຳລະ

ໃນການຄຸ້ມຄອງການບໍລິການແລກປ່ຽນເງິນຕາ ກົມຄຸ້ມຄອງລະບົບການຊຳລະ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກຳ, ສັງລວມ ແລະ ວິເຄາະ ຂໍ້ມູນຈາກການດຳເນີນການ ຊື້ ແລະ ຂາຍ ເງິນຕາ ຜ່ານລະບົບຊຳລະ ຂອງທະນາຄານທຸລະກິດ;

2. ຕິດຕາມ ກວດກາ ການ ຊື້ ແລະ ຂາຍ ເງິນຕາ ຜ່ານລະບົບຊຳລະ ຂອງທະນາຄານທຸລະກິດ ໃຫ້ສອດຄ່ອງຕາມຂໍ້ຕົກລົງສະບັບນີ້ ແລະ ຮັບປະກັນສະຖຽນລະພາບທາງດ້ານການເງິນ-ເງິນຕາ;

3. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບ ກັບກົມຄຸ້ມຄອງທະນາຄານທຸລະກິດ, ກົມນະໂຍບາຍເງິນຕາ ແລະ ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນ;

4. ສະຫຼຸບສະພາບ ແລະ ຕີລາຄາ ກ່ຽວກັບການການດຳເນີນການ ຊື້ ແລະ ຂາຍ ເງິນຕາ ຜ່ານລະບົບຊຳລະຂອງທະນາຄານທຸລະກິດ ເພື່ອລາຍງານໃຫ້ຂັ້ນເທິງຢ່າງເປັນປົກກະຕິ.

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ**

ໃນການຄຸ້ມຄອງການບໍລິການແລກປ່ຽນເງິນຕາ ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກຳ, ສັງລວມ ສະຖິຕິ ທະນາຄານທຸລະກິດທີ່ໃຫ້ບໍລິການແລກປ່ຽນເງິນຕາ, ລວມທັງໜ່ວຍແລກປ່ຽນເງິນຕາ ທີ່ເຄື່ອນໄຫວຢູ່ໃນບັນດາແຂວງທີ່ຂຶ້ນກັບການຄຸ້ມຄອງຂອງສາຂາທະນາຄານແຫ່ງ ສປປ ລາວ;

2. ຕິດຕາມ ກວດກາ ການເຄື່ອນໄຫວບໍລິການແລກປ່ຽນເງິນຕາ ສາຂາທະນາຄານທຸລະກິດ ໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

3. ເກັບກຳ, ສັງລວມ ແລະ ວິເຄາະ ຂໍ້ມູນຈາກການລາຍງານຂໍ້ມູນອັດຕາແລກປ່ຽນ ແລະ ການ ຊື້ ແລະ ຂາຍ ເງິນຕາ ປະຈຳວັນຂອງສາຂາທະນາຄານທຸລະກິດ;

4. ຕິດຕາມ ກວດກາ ການປະຕິບັດອັດຕາແລກປ່ຽນ ແລະ ການ ຊື້ ແລະ ຂາຍ ເງິນຕາ ຂອງສາຂາທະນາຄານທຸລະກິດ ໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

5. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບ ກັບກົມຄຸ້ມຄອງທະນາຄານທຸລະກິດ, ກົມນະໂຍບາຍເງິນຕາ ແລະ ກົມຄຸ້ມຄອງລະບົບການຊຳລະ ໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນ;

6. ສະຫຼຸບສະພາບການເຄື່ອນໄຫວບໍລິການແລກປ່ຽນເງິນຕາ, ການກຳນົດອັດຕາແລກປ່ຽນ ແລະ ການ ຊື້ ຂາຍ ເງິນຕາ ຂອງສາຂາທະນາຄານທຸລະກິດ ເພື່ອລາຍງານໃຫ້ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງລະບົບການຊຳລະ ແລະ ຂັ້ນເທິງຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 25 ຂໍ້ຫ້າມ**

ຫ້າມທະນາຄານທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ໃຫ້ບໍລິການແລກປ່ຽນເງິນຕາ ໂດຍບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

2. ສ້າງຕັ້ງໜ່ວຍແລກປ່ຽນເງິນຕາ ໂດຍບໍ່ໄດ້ຮັບອະນຸຍາດ;

3. ໃຫ້ບໍລິການແລກປ່ຽນເງິນຕານອກສະຖານທີ່ ທີ່ໄດ້ຮັບອະນຸຍາດ ຫຼື ບໍ່ຜ່ານລະບົບບັນຊີ, ລະບົບລາຍງານໃຫ້ທະນາຄານແຫ່ງ ສປປ ລາວ;

4. ກຳນົດ, ຕິດປະກາດ, ປະຕິບັດ ແລະ ດຳເນີນການ ຊື້ ແລະ ຂາຍ ເງິນຕາ ດ້ວຍອັດຕາແລກປ່ຽນ ທີ່ບໍ່ສອດຄ່ອງກັບລະບຽບການຂອງທະນາຄານແຫ່ງ ສປປ ລາວ;

5. ລາຍງານອັດຕາແລກປ່ຽນ ແລະ ການ ຊື້ ແລະ ຂາຍ ເງິນຕາ ຊັກຊ້າ ຫຼື ຂາດການລາຍງານ ໂດຍບໍ່ແຈ້ງເຫດຜົນ;

6. ນຳໃຊ້ບັນຊີເພື່ອແລກປ່ຽນເງິນຕາຂອງທະນາຄານທຸລະກິດ ເຄື່ອນໄຫວໃນຈຸດປະສົງທີ່ບໍ່ກ່ຽວຂ້ອງກັບການບໍລິການແລກປ່ຽນເງິນຕາ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ສຳລັບທະນາຄານທຸລະກິດທີ່ສ້າງຕັ້ງໜ່ວຍແລກປ່ຽນເງິນຕາ ນອກຈາກຫ້າມມີພຶດຕິກຳຕາມວັກໜຶ່ງຂອງມາດຕານີ້ ຍັງຫ້າມມີພຶດຕິກຳເພີ່ມເຕີມ ດັ່ງນີ້:

1. ເຊັນສັນຍາສ້າງຕັ້ງໜ່ວຍແລກປ່ຽນເງິນຕາໃດໜຶ່ງ ໃນສະຖານທີ່ຕັ້ງບໍ່ສອດຄ່ອງກັບທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

2. ອະນຸຍາດໃຫ້ໜ່ວຍແລກປ່ຽນເງິນຕາ ບໍລິການນອກສະຖານທີ່;

3. ອະນຸຍາດໃຫ້ໜ່ວຍແລກປ່ຽນເງິນຕາ ຂາຍເງິນຕາຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກກົມຄຸ້ມຄອງທະນາຄານທຸລະກິດ;

4. ເລີ່ນເລີ້ ຫຼື ເມີນເສີຍ ຕໍ່ຄວາມຮັບຜິດຊອບຂອງຕົນ ຫຼື ຕໍ່ພຶດຕິກຳທີ່ບໍ່ຖືກຕ້ອງຂອງໜ່ວຍແລກປ່ຽນເງິນຕາ;

5. ບໍ່ເອົາໃຈໃສ່ຕິດຕາມ ກວດກາ ການເຄື່ອນໄຫວຂອງໜ່ວຍແລກປ່ຽນເງິນຕາ;

6. ອະນຸຍາດໃຫ້ໜ່ວຍແລກປ່ຽນເງິນຕາ ນຳໃຊ້ບັນຊີທີ່ບໍ່ອອກຊື່ໜ່ວຍແລກປ່ຽນເງິນຕາ ໃນການບໍລິການແລກປ່ຽນເງິນຕາ;

7. ອະນຸຍາດໃຫ້ໜ່ວຍແລກປ່ຽນເງິນຕາ ນຳໃຊ້ບັນຊີເພື່ອແລກປ່ຽນເງິນຕາຂອງໜ່ວຍແລກປ່ຽນເງິນຕາເຄື່ອນໄຫວໃນຈຸດປະສົງທີ່ບໍ່ກ່ຽວຂ້ອງກັບການບໍລິການແລກປ່ຽນເງິນຕາ;

8. ອະນຸຍາດໃຫ້ໜ່ວຍແລກປ່ຽນເງິນຕາ ໃຫ້ບໍລິການທາງດ້ານການເງິນອື່ນ.

**ມາດຕາ 26 ມາດຕະການຕໍ່ຜູ້ລະເມີດ**

ທະນາຄານທຸລະກິດ ຫຼື ທະນາຄານທຸລະກິດທີ່ສ້າງຕັ້ງໜ່ວຍແລກປ່ຽນເງິນຕາ ທີ່ລະເມີດຂໍ້ຕົກລົງສະບັບນີ້ ມີລັກສະນະເບົາ ແລະ ເປັນຄັ້ງທຳອິດ ຈະຖືກກ່າວເຕືອນ ຢ່າງເປັນລາຍລັກອັກສອນ ພ້ອມທັງບັນທຶກໃຫ້ປັບປຸງ ແລະ ແກ້ໄຂການບໍລິການ ພາຍໃນເວລາ ຫ້າ ວັນ ໃຫ້ສອດຄ່ອງກັບລະບຽບການຂອງທະນາຄານແຫ່ງ ສປປ ລາວ, ຖ້າເກີນກຳນົດເວລາດັ່ງກ່າວ ຫຼື ມີການລະເມີດຊ້ຳ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ເຜີຍແຜ່ການລະເມີດລະບຽບການ ຜ່ານສື່ມວນຊົນ ແລະ ປັບໃໝ 10.000.000 (ສິບລ້ານ) ກີບ ຕໍ່ວັນ;

2. ໂຈະການບໍລິການຂອງທະນາຄານທຸລະກິດທີ່ໃຫ້ບໍລິການແລກປ່ຽນເງິນຕາດ້ວຍຕົນເອງ ຫຼື ຜ່ານໜ່ວຍແລກປ່ຽນເງິນຕາ ຈົນກວ່າຈະປັບປຸງ ແລະ ແກ້ໄຂການບໍລິການ ໃຫ້ສອດຄ່ອງກັບລະບຽບການຂອງ

ທະນາຄານແຫ່ງ ສປປ ລາວ ໃນກໍລະນີ ບໍ່ໄດ້ຮັບການປັບປຸງ, ແກ້ໄຂການບໍລິການ ໃຫ້ສອດຄ່ອງກັບລະບຽບການ ພາຍໃນເວລາ ສາມສິບ ວັນ.

ນອກຈາກນີ້, ກົມຄຸ້ມຄອງທະນາຄານທຸລະກິດ ສາມາດນໍາໃຊ້ມາດຕະການອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການກ່ຽວຂ້ອງຂອງທະນາຄານແຫ່ງ ສປປ ລາວ ເພື່ອປົກປ້ອງຄວາມໝັ້ນຄົງຂອງລະບົບທະນາຄານ ແລະ ຜູ້ຊົມໃຊ້ການບໍລິການທາງດ້ານການເງິນ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 27 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງທະນາຄານທຸລະກິດ ເປັນເຈົ້າການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງລະບົບການຊໍາລະ, ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ, ທະນາຄານທຸລະກິດ ແລະ ພາກສ່ວນກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 28 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍວ່າດ້ວຍທຸລະກິດແລກປ່ຽນເງິນຕາ ສະບັບເລກທີ 393/ທຫລ, ລົງວັນທີ 02 ກໍລະກົດ 2020 ແລະ ຂໍ້ຕົກລົງວ່າດ້ວຍການບໍລິການແລກປ່ຽນເງິນຕາຂອງທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາຕົວແທນ ສະບັບເລກທີ 449/ທຫລ, ລົງວັນທີ 14 ມິຖຸນາ 2022.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

**ບຸນເຫຼືອ ສິນໄຊວໍລະວົງ**